


# ລະບຽບການຂອງ EU ກ່ຽວກັບໄມ້ ແລະ ຜະລິດຕະພັນໄມ້ ທີ່ຈະເລີ່ມຈັດຕັ້ງປະຕິບັດ ນັບແຕ່ 3 ມີນາ 2013

ການຕັດໄມ້ຜິດກົດໝາຍ ແມ່ນການຕັດໄມ້ທີ່ຝ່າຝືນລະບຽບກົດໝາຍ ແລະ ກົດລະບຽບຂອງປະເທດ. ການຕັດໄມ້ຜິດກົດໝາຍ ເປັນບັນຫາທີ່ໃຫຍ່ລະດັບໂລກ ເຊິ່ງສ້າງຜົນເສຍຫາຍຕໍ່ເສດຖະກິດ, ສະພາບແວດລ້ອມ ແລະ ສັງຄົມ.

ທາງດ້ານເສດຖະກິດ, ການຕັດໄມ້ຢ່າງຜິດກົດໝາຍ ເຮັດໃຫ້ສູນເສຍລາຍຮັບ ແລະ ຜົນປະໂຫຍດທີ່ຄວນຈະໄດ້. ທາງດ້ານສິ່ງແວດລ້ອມ, ການຕັດໄມ້ຢ່າງຜິດກົດໝາຍ ຕິດພັນກັບການຕັດໄມ້ທຳລາຍປ່າ, ການປ່ຽນແປງຂອງດິນຟ້າອາກາດ ແລະ ການສູນພັນຂອງຊີວະນາໆພັນ. ທາງດ້ານສັງຄົມ, ການຕັດໄມ້ຢ່າງຜິດກົດໝາຍ ເຊື່ອມໂຍງກັບຂໍ້ຂັດແຍ່ງດ້ານທີ່ດິນ ແລະ ຊັບພະຍາກອນຕ່າງໆ, ການບັ່ນທອນສິດທິຂອງຊຸມຊົນທ້ອງຖິ່ນ ແລະ ຄົນພື້ນເມືອງ ແລະ ຂໍ້ຂັດແຍ່ງທີ່ອາດນຳມາເຊິ່ງການນຳໃຊ້ກຳລັງອາວຸດ.

ການດຳເນີນການທີ່ຜິດກົດໝາຍ ຍັງບັ່ນທອນຄວາມພະຍາຍາມຕໍ່ຄວາມຮັບຜິດຊອບຂອງຜູ້ປະກອບການທີ່ຖືກກົດໝາຍ ໂດຍການສະໜອງໄມ້ ແລະ ຜະລິດຕະພັນໄມ້ທີ່ຜິດກົດໝາຍ ໃນທ້ອງຕະຫຼາດດ້ວຍລາຄາທີ່ຖືກກວ່າ.

ໃນເດືອນຕຸລາ 2010, EU ໄດ້ປະກາດນຳໃຊ້ລະບຽບການ ກ່ຽວກັບໄມ້[1] ເພື່ອຕ້ານກັບການຄ້າໄມ້ທີ່ຜິດກົດໝາຍ; ອັນນີ້ແມ່ນໜຶ່ງໃນຄວາມພະຍາຍາມ ພາຍໃຕ້ແຜນປະຕິບັດງານ EU 2003 ວ່າດ້ວຍ ການບັງຄັບໃຊ້ກົດໝາຍປ່າໄມ້ ການຄຸ້ມຄອງ ແລະ ການຄ້າ (FLEGT).

1 'ລະບຽບການດັ່ງກ່າວໄດ້ວາງພັນທະພື້ນຖານຂອງຜູ້ປະກອບການ ທີ່ນຳເອົາໄມ້ ແລະ ຜະລິດຕະພັນໄມ້ ເຂົ້າມາສູ່ຕະຫຼາດ' (EU (995/2010)
http://eur-lex.europa.eu/JOHtml.do?uri=OJ:L:2010:295:SOM:EN:HTML

© Hemera

EUROPEAN COMMISSION

environment

## ພັນທະທີ່ສຳຄັນ ຂອງລະບຽບການ ກ່ຽວກັບຜະລິດຕະພັນໄມ້ຂອງ EU

ລະບຽບການດັ່ງກ່າວ ແມ່ນຕ້ານກັບການຄ້າໄມ້ ແລະ ຜະລິດຕະພັນໄມ້ເຖື່ອນ ໂດຍຜ່ານສາມພັນທະຫຼັກດັ່ງນີ້:

1) ຫ້າມການນຳເຂົ້າ ໄມ້ ແລະ ຜະລິດຕະພັນໄມ້ທີ່ຜິດກົດໝາຍ ທີ່ຜະລິດ ຈາກໄມ້ຜິດກົດໝາຍ ເຂົ້າສູ່ຕະຫຼາດ EU;

2) ຮຽກຮ້ອງໃຫ້ຜູ້ຄ້າກັບຕະຫຼາດ EU ທີ່ນຳເອົາຜະລິດຕະພັນໄມ້ເຂົ້າສູ່ຕະຫຼາດ EU ເປັນຄັ້ງທຳອິດ ຕ້ອງໄດ້ປະຕິບັດຕາມ 'ລະບຽບການກວດສອບຂໍ້ເທັດຈິງ / due diligence'.

ເມື່ອເຂົ້າສູ່ຕະຫຼາດແລ້ວ, ໄມ້ ແລະ ຜະລິດຕະພັນໄມ້ ອາດຈະຖືກຂາຍ ແລະ/ຫຼື ແປຮູບ ກ່ອນທີ່ຈະເຖິງມືລູກຄ້າຜູ້ສຸດທ້າຍ. ເພື່ອຊ່ວຍໃຫ້ສາມາດກວດສອບຜະລິດຕະພັນໄມ້ ຜູ້ດຳເນີນທຸລະກິດໃນພາກສ່ວນຕ່ອງໂສ້ການສະໜອງ (ໃນລະບຽບການດັ່ງກ່າວ ໝາຍເຖິງຜູ້ຄ້າ) ຕ້ອງມີໜ້າທີ່ດັ່ງນີ້:

3) ເກັບກຳບັນທຶກ, ໃບບິນ, ເອກະສານຕ່າງໆຂອງຜູ້ສະໜອງ ແລະ ລູກຄ້າຂອງຕົນໄວ້.


© Comstock




## ລະບຽບການກວດສອບຂໍ້ເທັດຈິງ ("due diligence") ແມ່ນຫຍັງ?

ແນວຄວາມຄິດຫລັກໆຂອງ 'due diligence' ແມ່ນການດຳເນີນການຄຸ້ມຄອງຄວາມສ່ຽງ ເພື່ອຫຼຸດຜ່ອນຄວາມສ່ຽງ ໃນການນຳເອົາໄມ້ທີ່ຕັດຢ່າງຜິດກົດໝາຍ, ຫຼື ຜະລິດຕະພັນໄມ້ທີ່ຜະລິດມາຈາກໄມ້ທີ່ຕັດຢ່າງຜິດກົດໝາຍ, ເຂົ້າສູ່ຕະຫຼາດ EU ໃຫ້ໜ້ອຍທີ່ສຸດ.

ສາມອົງປະກອບຫລັກຂອງ "ລະບົບ due diligence" ແມ່ນ:

- ຂໍ້ມູນ: ຜູ້ປະກອບການຕ້ອງສາມາດເຂົ້າເຖິງຂໍ້ມູນທີ່ອະທິບາຍເຖິງໄມ້ ແລະ ຜະລິດຕະພັນໄມ້, ປະເທດທີ່ໄມ້ໄດ້ຖືກຕັດ, ຈຳນວນ, ລາຍລະອຽດຂອງຜູ້ສະໜອງ ແລະ ຂໍ້ມູນກ່ຽວກັບການປະຕິບັດຕາມລະບຽບກົດໝາຍຂອງປະເທດນັ້ນໆ.

- ການປະເມີນຄວາມສ່ຽງ: ຜູ້ປະກອບການ ຕ້ອງດຳເນີນການປະເມີນຄວາມສ່ຽງ ຕໍ່ກັບໄມ້ທີ່ຖືກຕັດຢ່າງຜິດກົດໝາຍໃນເບື້ອງຕ່ອງໂສ້ການສະໜອງຂອງຕົນ, ໂດຍອີງຕາມຂໍ້ມູນທີ່ກຳນົດໄວ້ຂ້າງເທິງ ແລະ ຄຳນຶງເຖິງບັນທັດຖານທີ່ລະບຸໄວ້ໃນລະບຽບການດັ່ງກ່າວ.

- ການຫຼຸດຜ່ອນຄວາມສ່ຽງ: ເມື່ອການປະເມີນສະແດງໃຫ້ເຫັນວ່າ ມີຄວາມສ່ຽງຕໍ່ໄມ້ທີ່ຖືກຕັດຢ່າງຜິດກົດໝາຍ ໃນເບື້ອງຕ່ອງໂສ້ການສະໜອງ, ຄວາມສ່ຽງດັ່ງກ່າວ ສາມາດຫລຸດຜ່ອນລົງ ໂດຍການຮຽກຮ້ອງໃຫ້ສະໜອງຂໍ້ມູນເພີ່ມເຕີມ ແລະ ການຢັ້ງຢືນ ຈາກຜູ້ສະໜອງຂອງຕົນ.

ຄະນະກຳມາທິການເອີຣົບ (European Commission) ຈະສ້າງກົດລະບຽບລະອຽດ ກ່ຽວກັບ "ລະບົບ due diligence" ພາຍໃນເດືອນຕຸລາ 2012.

## ຜະລິດຕະພັນໃດແດ່ທີ່ລະບຽບການດັ່ງກ່າວຈະຄອບຄຸມເອົາ?

ລະບຽບການດັ່ງກ່າວ ຈະຄອບຄຸມຜະລິດຕະພັນໄມ້ຫຼາຍປະເພດ ຊຶ່ງລວມທັງຜະລິດຕະພັນທີ່ເຮັດຈາກໄມ້ລ້ວນໆ, ໄມ້ປູພື້ນ, ໄມ້ອັດ, ເນື້ອໄມ້ ແລະ ເຈ້ຍ. ຍົກເວັ້ນ, ຜະລິດຕະພັນທີ່ນຳມາຜະລິດຄືນໃໝ່ (Recycle) ຈະບໍ່ໄດ້ຖືກລວມເຂົ້ານຳ, ເຊັ່ນດຽວກັບຜະລິດຕະພັນທີ່ເຮັດຈາກຫວາຍ, ໄມ້ໄຜ່ ແລະ ສິ່ງພິມ ເຊັ່ນ: ປຶ້ມ, ວາລະສານ ແລະ ໜັງສືພິມ. ຂອບເຂດຂອງຜະລິດຕະພັນ ອາດຈະຖືກດັດປັບຖ້າເຫັນວ່າຈຳເປັນ.

ລະບຽບການດັ່ງກ່າວ ຈະຖືກນຳໃຊ້ທັງໄມ້ ແລະ ຜະລິດຕະພັນໄມ້ທີ່ນຳເຂົ້າ ແລະ ຜະລິດພາຍໃນປະເທດ.

ໄມ້ ແລະ ຜະລິດຕະພັນໄມ້ ທີ່ໄດ້ລະບຸເຂົ້າໃນໃບອະນຸຍາດ FLEGT[1] ຫຼື CITES[1] ແມ່ນໄດ້ຮັບການພິຈາລະນາວ່າ ປະຕິບັດຕາມຂໍ້ກຳນົດຂອງລະບຽບການດັ່ງກ່າວແລ້ວ.

---

[2] http://ec.europa.eu/environment/forests/flegt.htm
[3] http://ec.europa.eu/environment/cites/home_en.htm

## ການຈັດຕັ້ງປະຕິບັດລະບຽບການດັ່ງກ່າວ

ບັນດາປະເທດສະມາຊິກ EU ແຕ່ລະປະເທດ ຈະຕ້ອງໄດ້ແຕ່ງຕັ້ງອົງການຈັດຕັ້ງຮັບຜິດຊອບ ທີ່ຈະເຮັດໜ້າທີ່ໃນການບັງຄັບໃຊ້ລະບຽບການດັ່ງກ່າວ. ນອກນັ້ນ, ບັນດາປະເທດສະມາຊິກ ຍັງຕ້ອງໄດ້ກຳນົດປະເພດ ແລະ ຂອບເຂດການລົງໂທດທີ່ຈະນຳໃຊ້ໃນກໍລະນີທີ່ບໍ່ປະຕິບັດຕາມລະບຽບການທີ່ກຳນົດໄວ້.

ລະບຽບການດັ່ງກ່າວນີ້ ແມ່ນເພື່ອ "ອົງກອນຕິດຕາມກວດກາ" ທີ່ຈະໄດ້ຮັບການຮັບຮູ້ໂດຍ ຄະນະກຳມາທິການເອີຣົບ (European Commission). ບັນດາອົງກອນເຫລົ່ານີ້ ຈະເປັນໜ່ວຍງານເອກະລາດ ທີ່ຈະສະໜອງການດຳເນີນງານຂອງລະບົບ due diligence ໃຫ້ແກ່ຜູ້ປະກອບການກັບ EU. ຜູ້ປະກອບການສາມາດສ້າງລະບົບຂອງຕົນ ຫຼື ນຳໃຊ້ລະບົບທີ່ໄດ້ຮັບການສ້າງຂຶ້ນຈາກອົງກອນຕິດຕາມກວດກາ ກໍ່ໄດ້ເຊັ່ນກັນ.

## ຂໍ້ມູນເພີ່ມເຕີມ

ຂໍ້ມູນເພີ່ມເຕີມສາມາດເບິ່ງໄດ້ທີ່ເວັບໄຊ:
http://ec.europa.eu/environment/forests/illegal_logging.htm




ແຜ່ນພັບທີ່ເປັນສະບັບແປພາສາລາວນີ້ແມ່ນເຮັດໂດຍແຜນງານຊຸກຍູ້ພາກພື້ນອາຊີ ວ່າດ້ວຍ EU FLEGT ເພື່ອ ຈຸດປະສົງດ້ານຂໍ້ມູນເທົ່ານັ້ນ. ເນື້ອໃນບໍ່ໄດ້ເປັນການແປທາງການ.

Publications Office